ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ພະລາທິການ

ກົມຄຸ້ມຄອງການຜະລິດ-ທຸລະກິດ

ເລກທີ 281 /ຄຜ.ທກ

ນະຄອນຫຼວງວຽງຈັນ, ວັນທີ 12 ກຸມພາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມຄຸ້ມຄອງການຜະລິດ-ທຸລະກິດ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ໃນນາມຕາງໜ້າ ຄະນະຮັບຜິດຊອບ ຈັດຊື້ເຄື່ອງຈັກຜະລິດປ້າຍ ແລະ ວັດຖຸອຸປະກອນຮັບໃຊ້ວຽກງານວິຊາສະເພາະຂອງກອງ ຜະລິດປ້າຍ. ຂໍເຊີນ ບັນດາບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະ ໜອງເຄື່ອງຈັກຜະລິດປ້າຍ ແລະ ວັດຖຸອຸປະກອນ ຈໍານວນທັງໝົດ 06 ລາຍການ ລະອຽດມີເອກະສານຕິດ ຂັດ ກໍານົດເວລາມອບ-ຮັບເຄື່ອງ ພາຍໃນ 30 ວັນ.

2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການຈັດ ຊື້-ຈັດ ຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມຜົນໃຈເຂົ້າຮ່ວມແຂ່ງຂັນ ການ ປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມຄຸ້ມຄອງການຜະລິດ-ທຸລະກິດ ກົມໃຫຍ່ ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ຊັ້ນ II (ຕຶກເກົ່າ) ເບີໂທຕິດຕໍ່ 020 28138138 ໃນ ເວລາລັດ ຖະການ.

4. ເອກະສານປະມູນເລີ່ມຂາຍແຕ່ 13 ກຸມພາ 2026 ຫາ 16 ມີນາ 2026. ໃນລາຄາ 5,000,000 ກີບ/ຊອງ, ວິທີ ການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ບໍ່ມີການສົ່ງຄືນ.

5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ້ 17 ມີນາ 2026. ຊອງປະມູນທຸກໆຊອງຈະ ໄດ້ເປີດ ໃນວັນທີ 17 ມີນາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມຊັ້ນ II ກົມຄຸ້ມຄອງການຜະລິດ-ທຸລະກິດ. ໂດຍ ຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຊອງປະມູນໃດທີ່ສົ່ງຊ້າກວ່າ ເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງ ຄືນໂດຍບໍ່ມີການເປີດ.

6. ທຸກຊອງປະມູນຕ້ອງມີໜັງສືຄໍ້າປະກັນການປະມູນຈາກທະນາຄານ, ແຊັກ (VISA) ຫຼື ເງິນສົດ ຊຶ່ງມີ ມູນຄ່າ ຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

ຫົວໜ້າກົມຄຸ້ມຄອງການຜະລິດ-ທຸລະກິດ

ກົມໃຫຍ່ພະລາທິການ ປກສ

ກົມຄຸ້ມຄອງການຜະລິດ-ທຸລະກິດ

ພຄບສະຫວັນ ເດດອຸດົມ

Scanned with CamScanner